

# ໂຄງການ Pandemic EBT

## ເດັກນ້ອຍອາຍຸຕ່ຳກວ່າອາຍຸ6ປີ (2020-2021)

## ຄຳຖາມທີ່ມັກຖືກຖາມກັນຢູ່ເລື້ອຍໆ

ດັດແປງແກ້ໄຂ:ເດືອນຈູນ 2021

## ລາຍລະອຽດທົ່ວໄປ

### 1. ໂຄງການ Pandemic EBT ສຳລັບເດັກນ້ອຍອາຍຸຕ່ຳກວ່າອາຍຸ 6 ປີແມ່ນຫຍັງ?

ໂຄງການ Pandemic EBT ຫລື P-EBT ເອົາການຊ່ວຍເຫລືອອາຫານໃຫ້ເດັກນ້ອຍອາຍຸຕ່ຳກວ່າ 6 ປີເພື່ອຈະໃຊ້ແທນຄ່າຂອງຄາບອາຫານແມ່ນຍ້ອນການເຂົ້າໂຮງຮຽນທີ່ຖືກລຸດລົງຫລືຍ້ອນການປິດສະຖານທີ່ຝາກເດັກນ້ອຍໃນລະຫວ່າງປີໂຮງຮຽນ 2020-21. ກະຣຸນາເບິ່ງຄຳຖາມ 5 – 11 ສຳລັບລາຍລະອຽດຂອງເງື່ອນໄຂຮັບເອົາຂອງ P-EBT.

### 2. ອັນນີ້ແຕກຕ່າງແນວໃດຈາກ P-EBT ສຳລັບເດັກນ້ອຍເຂົ້າໂຮງຮຽນຢູ່?

ໂຄງການ P-EBT ຂອງປີໂຮງຮຽນ 2020-21 ສຳລັບເດັກນ້ອຍທີ່ໄດ້ຈົດຊື່ເຂົ້າໂຮງຮຽນໄດ້ຖືກອີງໃສ່ການເຂົ້າໂຮງຮຽນໂດຍບຸກຄົນຈຳກັດທີ່ໂຮງຮຽນໄດ້ລາຍງານມາ. P-EBT ສຳລັບເດັກນ້ອຍອາຍຸຕ່ຳກວ່າ6 ປີຖືວ່າເດັກນ້ອຍທຸກໆໂຄງການອາຫານຈຳເປັນໄດ້ຖືກສະທ້ອນເຖິງຍ້ອນການເຂົ້າຫລືການປິດທີ່ຈຳກັດຂອງບ່ອນຝາກເດັກນ້ອຍ.

### 3. ຖ້າຫາກວ່າຂ້ອຍໄດ້ຮັບການຊ່ວຍເຫລືອ P-EBT, ມັນຈະສະທ້ອນເຖິງສະພາບການເຂົ້າເມືອງຂອງຂ້ອຍຫລືເຮັດໃຫ້ຂ້ອຍກາຍເປັນພາລະຂອງສາທາຣະນະຊົນບໍ່?

ບໍ່ແມ່ນ.ກົດຣະບຽບການເປັນພາລະຂອງສາທາຣະນະຊົນບໍ່ຖືກໃຊ້ໃສ່ການຊ່ວຍເຫລືອ P-EBT ແລະການຊ່ວຍເຫລືອ P-EBT ຈະບໍ່ສະທ້ອນເຖິງສະພາບການເຂົ້າເມືອງ.ອັນນີ້ລວມເອົາເດັກນ້ອຍຜູ້ທີ່ໄດ້ຮັບ P-EBT ຜ່ານໂຄງການຊ່ວຍເຫລືອອາຫານທີ່ຖືກອຸບປະຖຳໂດຍຣັດວໍຊິງຕັນ.

### 4. ລູກຂອງຂ້ອຍໄດ້ຄາບອາຫານທ່ຽງຢູ່ໂຮງຮຽນຫລືຢູ່ໃນໂຄງການ Headstart ຫລື ECEAP. ຂ້ອຍຍັງມີສິດໄດ້ຮັບ P-EBT ບໍ່?

ແມ່ນ.ການຊ່ວຍເຫລືອ P-EBT ແມ່ນການຊ່ວຍເຫລືອອາຫານເພີ້ມເຕີມ.ເດັກນ້ອຍຈະດຳເນີນທີ່ຈະໄດ້ຮັບຄາບອາຫານຈັບເອົາແລະໄປຢູ່ຕາມໂຮງຮຽນຫລືສະຖານທີ່ຊຸມນຸມຊົນ,ຫລືອາຫານສຸກເສີນຢູ່ຕາມສະຖານທີ່ລ້ຽງເກືອສຸກເສີນ COVID-19 ທີ່ຖືກສະເນີໃຫ້ຢູ່ຕາມສະຖານທີ່ໃນຊຸມນຸມຊົນ,ເຖິງແມ່ນວ່າເຂົາເຈົ້າກຳລັງໄດ້ຮັບການຊ່ວຍເຫລືອ P-EBT ຢູ່ກໍຕາມ.

*ສະຖາບັນແຫ່ງນີ້ເປັນບ່ອນບໍຣິການທີ່ໃຫ້ໂອກາດເທົ່າທຽມກັນ.*

Washington State Department of Social & Health Services
Transforming lives
(6/21)

## 5. ແມ່ນໃຜແດ່ມີເງື່ອນໄຂໄດ້ຮັບ P EBT ສຳລັບເດັກນ້ອຍອາຍຸຕ່ຳກວ່າອາຍຸ 6 ປີ?

ເດັກນ້ອຍຜູ້ທີ່ໄດ້ຮັບການຊ່ວຍເຫລືອອາຫານຈຳເປັນມີສິດໄດ້ຮັບ P-EBT ຖ້າຫາກວ່າເຂົາເຈົ້າ:

- ຕ່ຳກວ່າອາຍຸ 6 ປີ.
- ສະມາຊິກຂອງຄອບຄົວທີ່ໄດ້ຮັບໂຄງການຊ່ວຍເຫລືອອາຫານຈຳເປັນຂອງຣັດວໍຊິງຕັນໃນທຸກໆເວລາໃນຣະຫວ່າງເດືອນອິກໂຕເບີ 1, 2020 ແລະເດືອນງູນ 30, 2021.
- ອາສັຍຢູ່ໃນຄາວຕີທີ່ມີໂຮງຮຽນບ່ອນທີ່ເຂົ້າຮ່ວມນຳໂຄງການອາຫານທ່ຽງຢູ່ໂຮງຮຽນແລະໂຄງການອາຫານເຊົ້າຢູ່ໂຮງຮຽນແຫ່ງຊາດທີ່ມີການບໍຣິການຄາບເຂົ້າຈຳກັດ.

## 6. ພວກເຮົາໄດ້ຮັບການຊ່ວຍເຫລືອອາຫານ,ແຕ່ວ່າສຳນວນຂອງຂ້ອຍຖືກປິດແລ້ວ.ພວກເຮົາຍັງມີສິດໄດ້ຮັບ P-EBT ຢູ່ບໍ່?

ເດັກນ້ອຍທີ່ມີເງື່ອນໄຂໄດ້ຮັບ P-EBT ໃນຖານະເປັນເດັກນ້ອຍອາຍຸຕ່ຳກວ່າອາຍຸ 6 ປີເທົ່ານັ້ນຈະມີສິດໄດ້ຮັບ P-EBT ສຳລັບເດືອນທີ່ຄອບຄົວຂອງເຂົາເຈົ້າຖືກເປີດຮັບເອົາການຊ່ວຍເຫລືອອາຫານຈຳເປັນຢູ່ຕັ້ງແຕ່ເດືອນອິກໂຕເບີ 2020 ໄປເຖິງເດືອນງູນ 2021 ຖ້າຫາກວ່າໂຮງຮຽນບ່ອນນຶ່ງຢູ່ໃນຄາວຕີຂອງເຂົາເຈົ້າມີການບໍຣິການຄາບອາຫານຢູ່ໃນສະຖານທີ່ທີ່ຈຳກັດ.ຄອບຄົວທີ່ສົນໃຈໃນການຮ້ອງຂໍເອົາໃຫມ່ສາມາດຕິດຕໍ່ຫາສູນກາງຕິດຕໍ່ປະຊາສັມພັນຂອງກົມ DSHS ໄດ້ທີ່ເລກ 877-501-2233 ແລະຮ້ອງຂໍເອົາທາງໂທຣະສັບຫລືຍື່ນຄຳຮ້ອງຂໍໄດ້ທີ່. www.washingtonconnection.org.

## 7. ຂ້ອຍໄດ້ຮັບການຊ່ວຍເຫລືອອາຫານແລ້ວ.ຂ້ອຍຈະມີສິດໄດ້ຮັບ P-EBT ໂດຍອັດຕະໂນມັດໂລດບໍ່?

ທ່ານຈະໄດ້ຮັບການຊ່ວຍເຫລືອ P-EBT ໂດຍອັດຕະໂນມັດໂລດຖ້າຫາກວ່າທ່ານອາສັຍຢູ່ໃນຄາວຕີທີ່ມີຢ່າງຫນ້ອຍໂຮງຮຽນບ່ອນນຶ່ງທີ່ມີການບໍຣິການຄາບອາຫານຢູ່ສະຖານທີ່ຈຳກັດຕາມທີ່ຖືກບັນຣະຍາຍຢູ່ໃນ #5. ຄອບຄົວຜູ້ທີ່ອາສັຍຢູ່ໃບຄາວຕີທີ່ບໍ່ຖືກມີປະສົບນຳຄາບອາຫານຢູ່ໂຮງຮຽນຈຳກັດຈະບໍ່ມີເງື່ອນໄຂໄດ້ຮັບການຊ່ວຍເຫລືອ P-EBT.

## 8. ລູກຂອງຂ້ອຍຢູ່ບ່ອນຝາກເດັກ,ແຕ່ວ່າພວກເຮົາບໍ່ໄດ້ຮັບອາຫານຈຳເປັນ.ພວກເຮົາມີສິດໄດ້ຮັບ P-EBT ສຳລັບເດັກນ້ອຍອາຍຸຕ່ຳກວ່າ 6 ປີບໍ່?

ບໍ່.ການຊ່ວຍເຫລືອ P-EBT ສຳລັບເດັກນ້ອຍອາຍຸຕ່ຳກວ່າ 6 ປີແມ່ນສຳລັບເດັກນ້ອຍຜູ້ທີ່ຢູ່ໃນຄອບຄົວທີ່ກຳລັງໄດ້ຮັບອາຫານຈຳເປັນໃນຣະຫວ່າງເດືອນອິກໂຕເບີ 2020 ແລະເດືອນງູນ 2021. ຖ້າຫາກວ່າທ່ານເຊື່ອວ່າທ່ານຈະມີສິດໄດ້ຮັບອາຫານຈຳເປັນ,ທ່ານສາມາດຕິດຕໍ່ຫາສູນກາງຕິດຕໍ່ປະຊາສັມພັນຂອງກົມ DSHS ໄດ້ທີ່ເລກ 877-501-2233 ແລະຮ້ອງຂໍເອົາທາງໂທຣະສັບຫລືຍື່ນຄຳຮ້ອງຂໍໄດ້ທີ່ www.washingtonconnection.org.

## 9. ຂ້ອຍຈະຮູ້ຈັກໄດ້ແນວໃດວ່າລູກຂອງຂ້ອຍມີເງື່ອນໄຂໄດ້ຮັບການຊ່ວຍເຫລືອ P-EBT ຫລືບໍ່?

ເດັກນ້ອຍຜູ້ທີ່ມີເງື່ອນໄຂໄດ້ຮັບຈະໄດ້ຮັບໃບແຈ້ງການແລະບັດ P-EBT ທີ່ມີຊື່ຂອງເຂົາເຈົ້າເອງຢູ່ໃນບັດ.ພວກເຮົາຄາດວ່າໃບແຈ້ງການຈະຖືກສົ່ງອອກໄປຫາເດັກນ້ອຍຜູ້ທີ່ມີເງື່ອນໄຂໄດ້ຮັບເລີ້ມຕົ້ນໃນເດືອນຈຸນລາຍ 2021. ບັດ P-EBT ຈະຖືກສົ່ງອອກໄປບໍ່ພໍເທົ່າໃດຫລັງຈາກນັ້ນຖ້າຫາກວ່າເຂົາເຈົ້າຍັງບໍ່ທັນມີບັດເທື່ອ. ຄອບຄົວຄວນຈະເກັບຮັກສາບັດ P-EBT ຂອງເຂົາເຈົ້າໄວ້ຍ້ອນວ່າການຊ່ວຍເຫລືອ P-EBT ເພີ້ມເຕີມອີກອາດຈະຖືກຕື່ມເຂົ້າໃສ່ນຳຫລັງຖ້າຫາກວ່າພາວະສຸກເສີນທາງສຸຂະພາບຂອງສາທາຣະນະຊົນ COVID-19 ຂອງຣັດຖະບານກາງຍັງດຳເນີນຕໍ່ໄປຢູ່.ການຊ່ວຍເຫລືອ P-EBT ຈະບໍ່ຖືກຕື່ມໃສ່ບັດູ້ເຊທແຕ່ຖທີ່ມີຢູ່ແລ້ວ.

## 10. ເປັນຫຍັງມັນຈຶ່ງໃຊ້ເວລາດົນນານແທ້ເພື່ອຈະໄດ້ຮັບບັດ P-EBT?

ກົດຫມາຍຂອງຣັດຖະບານກາງບົ່ງໃຫ້ຣັດບໍ່ໃຫ້ຊ້ຳການຊ່ວຍເຫລືອກັນສຳລັບເດັກນ້ອຍຜູ້ທີ່ໄດ້ຮັບການຊ່ວຍເຫລືອ P-EBT ແລ້ວ.ພວກເຮົາຈະກວດເບິ່ງຄືນໃນນັກຮຽນຜູ້ທີ່ໄດ້ຈົດຊື່ເຂົ້າໃນໂຄງການ Headstart ຫລື ECEAP ເພື່ອໃຫ້ແນ່ໃຈວ່າເຂົາເຈົ້າໄດ້ຮັບຈຳນວນການຊ່ວຍເຫລືອທີ່ຖືກຕ້ອງ.

## 11. ຂ້ອຍຈະໄດ້ຮັບການຊ່ວຍເຫລືອ P-EBT ໄດ້ແນວໃດສຳລັບເດັກນ້ອຍອາຍຸຕ່ຳກວ່າ 6 ປີ ?

ຄອບຄົວທີ່ມີເງື່ອນໄຂໄດ້ຮັບບໍ່ຕ້ອງໄດ້ຮ້ອງຂໍເອົາເພື່ອຈະໄດ້ຮັບການຊ່ວຍເຫລືອ P-EBT.ເດັກນ້ອຍຜູ້ທີ່ມີເງື່ອນໄຂໄດ້ຮັບແຕ່ລະຄົນຈະໄດ້ຮັບບັດ P-EBT ທີ່ຖືກສົ່ງໂດຍກົງໄປຫາທີ່ຢູ່ທີ່ໄດ້ຖືກບັນທຶກໄວ້ຢູ່ໃນສຳນວນອາຫານຈຳເປັນຂອງເຂົາເຈົ້ານຳກົມ DSHS.

## 12. ພວກເຮົາໄດ້ຮັບການຊ່ວຍເຫລືອ P-EBT ແລ້ວ.ພວກເຮົາຈະໄດ້ຮັບຕື່ມອີກບໍ່?

ເດັກນ້ອຍອາດຈະໄດ້ຮັບບັດ P-EBT ແລ້ວຍ້ອນວ່າເຂົາເຈົ້າມີເງື່ອນໄຂໄດ້ຮັບຄາບອາຫານຟຣີຫລືລຸດຣາຄາ.ພວກເຮົາບໍ່ສາມາດທີ່ຈະເອົາການຊ່ວຍເຫລືອ P-EBT ຊ້ຳກັນໃຫ້ໄດ້,ແຕ່ວ່າພວກເຮົາຈະກວດເບິ່ງສຳນວນຄືນເພື່ອຈະເບິ່ງວ່າເດັກນ້ອຍຈະໄດ້ຮັບການຊ່ວຍເຫລືອຕື່ມອີກບໍ່ໃນຖານະເປັນເດັກນ້ອຍອາຍຸຕ່ຳກວ່າ 6 ປີ.ຖ້າຫາກວ່າມີເງື່ອນໄຂໄດ້ຮັບຕື່ມ,ການຊ່ວຍເຫລືອເພີ້ມເຕີມຈະຖືກເອົາເຂົ້າໃສ່ບັດ P-EBT ໃບດຽວກັນ.

## 13. ການຊ່ວຍເຫລືອຂອງຂ້ອຍຈະຖືກໃສ່ວັນທີຍ້ອນຫລັງຄືນໄປຫາວັນທີເລີ້ມຕົ້ນຂອງປີໂຮງຮຽນບໍ່(ເຊັ່ນເດືອນເບ 2020)?

ບໍ່.ພວກເຮົາຈະສາມາດເອົາໃຫ້ໄດ້ເທົ່ານັ້ນການຊ່ວຍເຫລືອ P-EBT ໃຫ້ເດັກນ້ອຍຢູ່ໃນຄອບຄົວອາຫານຈຳເປັນສຳລັບເດືອນທີ່ເດັກນ້ອຍຖືກເປີດຢູ່ໃນຫນ່ວຍການຊ່ວຍເຫລືອອາຫານຈຳເປັນຕັ້ງແຕ່ເດືອນອົກໂຕເບີ 1, 2020 ໄປເຖິງເດືອນຈູນ 30, 2021, ຖ້າຫຍ້ອນວ່າຖືກອະນຸມັດຈາກຣັດຖະບານກາງໂດຍສະພາຄອນແກຣສ.

## 14. ຂ້ອຍຕ້ອງໄດ້ເຮັດຫຍັງແດ່ເມື່ອເວລາບັດ P-EBT ໃບໃຫມ່ມາຮອດໃນທາງໄປສະນີ (ຖ້າຫາກວ່າຂ້ອຍຍັງບໍ່ທັນມີໃບນຶ່ງເທື່ອ?

ປະຕິບັດຕາມຄຳແນະນຳທີ່ມານຳບັດ P-EBT ຂອງທ່ານແລະແຕ່ງຕັ້ງເລກປະຈຳຕົວທີ່ປອດພັຍຂອງທ່ານຫລືເລກ PIN. ເກັບຮັກສາບັດຂອງທ່ານໄວ້! ຖ້າຫາກວ່າໂຄງການ P-EBT ດຳເນີນຕໍ່ໄປ,ພວກເຮົາຈະຕື່ມການຊ່ວຍເຫລືອໃສ່ບັນຊີແລະບັດຂອງທ່ານອີກ.

## 15. ຂ້ອຍຄວນຈະເກັບຮັກສາບັດ P-EBT ຂອງຂ້ອຍໄວ້ບໍ່?

ແມ່ນ.ການຊ່ວຍເຫລືອເພີ້ມເຕີມອາດຈະຖືກເຮັດອອກໃຫ້ໄດ້ໃນພາຍຫລັງໃນປີ.ບັດຕ້ອງຖືກເກັບຮັກສາໄວ້ໃນບ່ອນທີ່ປອດພັຍ.

## 16. ຂ້ອຍມີຄວາມຄຸ້ມຄອງແບ່ງກັນຣະຫວ່າງຂ້ອຍເອງແລະພໍ່ແມ່ອີກຄົນນຶ່ງ.ແມ່ນໃຜສາມາດໃຊ້ບັດ P-EBT ຂອງລູກຂອງພວກເຮົາ?

ນານເທົ່ານານທີ່ສະມາຊິກຄອບຄົວຜູ້ຮັບຜິດຊອບເຊັ່ນພໍ່ແມ່ອີກຄົນນຶ່ງຫລືຜູ້ເບິ່ງແຍງດູແລເຂົ້າເຖິງການຊ່ວຍເຫລືອໃນນາມຂອງເດັກນ້ອຍຜູ້ທີ່ມີເງື່ອນໄຂໄດ້ຮັບ,ພໍ່ແມ່ອີກຄົນນຶ່ງຫລືຜູ້ເບິ່ງແຍງດູແລໄດ້ຖືກອະນຸຍາດໃຫ້ໃຊ້ບັດ P-EBT ຂອງເດັກນ້ອຍ.

## 17. ຖ້າຫາກວ່າຂ້ອຍຕ້ອງການບັດ P-EBT ໃບໃຫມ່ແທນເດຍ້ອນວ່າບັດໄດ້ເສັຽໄປຫລືບັດມີຄວາມເສັຽຫາຍ?

ບັດ P-EBT ເຮັດແທນໃບໃຫມ່ຈະຖືກເຮັດອອກມາໂດຍການໂທຫາພໍ່ຄ້າ EBT, FIS ໄດ້ທີ່ເລກ888-328-9271. ຄອບຄົວຈະແວ່ປ້ຽນໄດ້ອີກຄືກັນທີ່ www.ebtEdge.com ຫລືແອບ໌ ebtEdge ຖ້າຫາກວ່າບັດເຮັດແທນໃບໃຫມ່ແມ່ນຕ້ອງການ.ເພື່ອຈະຮ້ອງຂໍເອົາບັດ P-EBT ເຮັດແທນໃບໃຫບ໌, ທ່ານຈະຕ້ອງການຣາຍຣະອຽດຕໍ່ລົງໄປນີ້:ຊື່ເຕັມຂອງເດັກນ້ອຍ,ວັນເກີດ,ຣະຫັດເຂດແລະທີ່ຢູ່ເຕັມຕາມທີ່ໂຮງຮຽນໄດ້ເອົາໃຫ້.ທີ່ຢູ່ໄປສະນີຕ້ອງກົງກັນກັບທີ່ຢູ່ຢູ່ໃນຣະບົບເພື່ອວ່າບັດເຮັດແທນໃບໃຫມ່ຈະຖືກສົ່ງອອກໄປໂດຍຜູ້ຈຳຫນ່າຍ EBT. ກະຣຸນາຄາດຫມາຍວ່າຈະໃຊ້ເວລາເຈັດຫາ 10 ວັນເພື່ອຈະໄດ້ຮັບບັດຂອງທ່ານ. ເບິ່ງຄຳຖາມ 27 ເພື່ອຣາຍຣະອຽດເພີ້ມເຕີມກ່ຽວກັບວ່າເມື່ອເວລາທີ່ຢູ່ຂອງທ່ານບໍ່ກົງກັນກັບທີ່ຢູ່ທີ່ຜູ້ຈຳຫນ່າຍ EBT ຫລື FIS ມີຢູ່ໃນສຳນວນ.

## 18. ຂ້ອຍສາມາດເອົາການຊ່ວຍເຫລືອເຫລົ່ານີ້ໃສ່ໃນບັດອາຫານ EBT ທີ່ມີຢູ່ແລ້ວຂອງຂ້ອຍໄດ້ບໍ່?

ບໍ່ໄດ້.ໂຄງການ P-EBT ແມ່ນພິເສດສະເພາະແລະການຊ່ວຍເຫລືອແມ່ນຕ່າງຫາກຈາກການຊ່ວຍເຫລືອອາຫານຫລືເງິນສົດແນວອື່ນທີ່ມີໄວ້ໃຫ້ຢູ່ໃນບັດ Quest EBT ຂອງທ່ານ.

## 19. ຂ້ອຍບໍ່ໄດ້ຮັບໃບແຈ້ງການ.ຂ້ອຍມີສິດໄດ້ຮັບ P-EBT ບໍ່?

ຖ້າຫາກວ່າທ່ານບໍ່ໄດ້ຮັບໃບແຈ້ງການ,ລູກຂອງທ່ານອາດຈະບໍ່ມີເງື່ອນໄຂໄດ້ຮັບ.ຖ້າຫາກວ່າທ່ານຄິດວ່າອັນນີ້ແມ່ນຄວາມຜິດພາດ,ກະຣຸນາຕິດຕໍ່ຫາສູນກາງຕິດຕໍ່ຂອງ P-EBT ໄດ້ທີ່ເລກ 833-518-0282 ເພື່ອຈະກວດເບິ່ງເງື່ອນໄຂຮັບເອົາຂອງເຂົາເຈົ້າ.

## 20. ພວກເຮົາບໍ່ຕ້ອງການການຊ່ວຍເຫລືອອັນນີ້.ຂ້ອຍສາມາດປະຕິເສດມັນໄດ້ບໍ່?

ພວກເຮົາແນະນຳໃຫ້ຄອບຄົວທີ່ຖືກພົບເຫັນວ່າມີເງື່ອນໄຂໄດ້ຮັບ P-EBT ທີ່ຈະໃຊ້ການຊ່ວຍເຫລືອສຳລັບຄອບຄົວຂອງເຂົາເຈົ້າແລະເພື່ອຊ່ວຍເຫລືອທຸກຍູ້ເສດຖະກິດທ້ອງຖິ່ນ.ການຊ່ວຍເຫລືອແມ່ນໂອນຕໍ່ໃຫ້ບໍ່ໄດ້ແລະບໍ່ສາມາດໃຫ້ເປັນຂອງຂວັນຫລືບໍຣິຈາກໃຫ້.ຖ້າຫາກວ່າທ່ານຍັງປະສົງທີ່ຈະປະຕິເສດການຊ່ວຍເຫລືອ,ທ່ານຈະທຳລາຍບັດຫລືສົ່ງບັດຄືນໄປຫາທີ່ຢູ່ທາງດ້ານຫລັງຂອງບັດໄດ້.ການຊ່ວຍເຫລືອຈະຖືກຖອນອອກໂດຍອັດຕະໂນມັດໂລດຫລັງຈາກ 274 ວັນຂອງການບໍ່ໃຊ້ການຊ່ວຍເຫລືອ.

# ຈຳນວນການຊ່ວຍເຫລືອ P-EBT

## 21. ລູກຂອງຂ້ອຍຈະໄດ້ຮັບ P-EBT ສຳລັບເດັກນ້ອຍອາຍຸຕ່ຳກວ່າ 6 ປີເທົ່າໃດ?

ຄາບອາຫານໄດ້ຖືກຄິດໄລ່ຊົ່ວໂມງເປີດໂຮງຮຽນໃນອັດຕຣາ P-EBT ປະຈຳວັນ $6.82. ອັນນີ້ຈະຈະຄຸ້ມຄ່າຄາບເຊົ້າທ່ຽງ,ຄາບເຊົ້າເຊົ້າແລະເຄື່ອງກິນຫລິ້ນ,ຄູນໃຫ້ຈຳນວນສະເລັ່ຍຂອງວັນດຳເນີນກິຈການ 18 ວັນຕໍ່ເດືອນ.ການໃຊ້ຣາຍຣະອຽດທີ່ໂຮງຮຽນໄດ້ລາຍງານມາກ່ຽວກັບການບໍຣິການອາຫານຢູ່ສະຖານທີ່ຈຳກັດ,ຈຳນວນຂອງການຊ່ວຍເຫລືອ P-EBT ໄດ້ຖືກອີງໃສ່ຄາວຕີຂອງບ່ອນຢູ່ອາສັຍຂອງເດັກນ້ອຍຕາມທີ່ຖືກຊີ້ບອກຢູ່ໃນສຳນວນອາຫານຈຳເປັນແລະການບໍຣິການຄົບອາຫານຕ່ຳສຸດທີ່ຖືກລາຍງານມາຢູ່ໃນຄາວຕີສຳລັບແຕ່ລະເດືອນ,ອົກໂຕເບີ 2020 ຮອດຈູນ 2021. ການຊ່ວຍເຫລືອອາດຈະແຕກຕ່າງກັນຈາກຄາວຕີນຶ່ງໄປຫາຄາວຕີນຶ່ງ.

| ການບໍຣິການຄາບອາຫານທີ່ມີຫລາຍຢູ່ຕາມຄາວຕີ | ການຄິດໄລ່ | ຈຳນວນເງິນດອນລາຕໍ່ເດືອນ |
|---|---|---|
| ການຮ່ຳຮຽນທາງສື່ສານເຕັມເວລາຫລືການປິດໂຮງຮຽນ | $6.82 x 18 x 100% | $123 |
| ໂດຍຕົນເອງນຶ່ງວັນຫລືໂດຍຕົນເອງສອງວັນ | $6.82 x 18 x 70% | $76 |
| ໂດຍຕົນເອງສາມວັນຫລືໂດຍຕົນເອງສີ່ວັນ | $6.82 x 18 x 30% | $37 |

## 22. ເປັນຫຍັງຈຳນວນເງິນຈຶ່ງບໍ່ຖືກອີງໃສ່ການເຂົ້າໂຮງຮຽນຕົວຈິງຂອງລູກຂອງຂ້ອຍຢູ່ສູນກາງຝາກເດັກນ້ອຍ?

ເພື່ອຈະຊ່ວຍເຫລືອເດັກນ້ອຍສ່ວນຫລາຍ,ພວກເຮົາໄດ້ໃຊ້ຈຳນວນມາດຕະຖານທົ່ວຣັດຊຶ່ງໄດ້ຖືກອະນຸຍາດໃຫ້ເດັກນ້ອຍ.ພວກເຮົາບໍ່ສາມາດທີ່ຈະກຳກັບເບິ່ງນຳການມາສູນຝາກເດັກນ້ອຍຂອງແຕ່ລະບຸກຄົນ.ພວກເຮົາໃຊ້ການມີໄວ້ໃຫ້ຂອງການບໍຣິການຄາບອາຫານຢູ່ໂຮງຮຽນເພື່ອຈະທຳການສະລູບຄວາມຂອງຊົ່ວໂມງຈຳກັດແລະການເຂົ້າມາຂອງເດັກນ້ອຍຢູ່ບ່ອນຝາກເດັກນ້ອຍ.

## 23. ຈຳນວນຂອງການຊ່ວຍເຫລືອ P-EBT ສາມາດຖືກປ່ຽນຫລືດັດແປງໄດ້ບໍ່?

ຈຳນວນຂອງ P-EBT ຈະຖືກອີງໃສ່ຄາວຕີຂອງບ່ອນຢູ່ອາສັຍບ່ອນລ່າສຸດຫມູ່ທີ່ຖືກບົ່ງຢູ່ໃນສຳນວນອາຫານຈຳເປັນຂອງທ່ານແລະການບໍຣິການຄາບອາຫານຕ່ຳສຸດທີ່ຖືກລາຍງານມາໂດຍໂຮງຮຽນຂອງຄາວຕີນັ້ນ.ຕາມສິ່ງທີ່ໂຮງຮຽນໄດ້ລາຍງານມາວ່າເປັນແບບຮ່າງຂອງການຮຽນຮູ້ຕົ້ນຕໍສຳລັບຫມົດໂຮງຮຽນສຳລັບແຕ່ລະເດືອນ.ຖ້າຫາກວ່າທ່ານເຊື່ອວ່າມັນມີຄວາມຜິດພາດຢູ່ໃນຈຳນວນຂອງ P-EBT ຂອງລູກຂອງທ່ານ,ທ່ານສາມາດໂທຫາສູນກາງຕິດຕໍ່ຂອງ P-EBT ໄດ້ທີ່ເລກ 833-518-0282 ເພື່ອຈະຮ້ອງຂໍໃຫ້ເຂົາເຈົ້າກວດເບິ່ງເງື່ອນໄຂຮັບເອົາຂອງທ່ານຄືນ.

## 24. ມັນຈະມີການຊ່ວຍເຫລືອ P-EBT ຕື່ມອີກບໍ່?

ໂຄງການຈະດຳເນີນຕໍ່ໄປນານເທົ່ານານທີ່ຍັງມີເຫດການສຸກເສີນດ້ານສຸຂະພາບຂອງສາທາຣະນະຊົນ COVID-19 ຂອງຣັດຖະບານກາງ.ອັນນີ້ຈະລວມເອົາຢ່າງເຂົ້າຫາເດືອນຂອງຣະດູຮ້ອນ.ໃຫ້ແນ່ໃຈວ່າຈະຮັກສາບັດຂອງລູກຂອງທ່ານສຳລັບການຊ່ວຍເຫລືອໃນອະນາຄົດທີ່ອາດເປັນໄປໄດ້.ກະຣຸນາແວ່ເຂົ້າປ້ຽມ www.dshs.wa.gov/pebt ເພື່ອຣາຍຣະອຽດເພີ້ມເຕີມ.

# ສູນກາງຕິດຕໍ່ຫາຂອງ P-EBT

## 25. ຂ້ອຍຈະໂທຫາໃຜສໍາລັບຄໍາຖາມກ່ຽວກັບ P-EBT?

ຄໍາຖາມກ່ຽວກັບເງື່ອນໄຂຮັບເອົາຂອງ P-EBT ທຸກໆຢ່າງຈະຖືກຖາມໄປຫາສູນກາງຕິດຕໍ່ຂອງ P-EBT ໄດ້ທີ່ເລກ 833-518-0282.

## 26. ຂ້ອຍຈະໂທຫາໃຜເພື່ອຈະຕັ້ງເລກ PIN?

ເມື່ອທ່ານໄດ້ຮັບບັດຂອງລູກຂອງທ່ານແລ້ວ,ຄອບຄົວຈະໂທຫາຜູ້ຈໍາຫນ່າຍ EBT ໄດ້ທີ່ເລກ 888-328-9271 ເພື່ອຈະຕັ້ງເລກ PIN.

## 27. ຂ້ອຍຈະຕິດຕໍ່ຫາໃຜຖ້າຫາກວ່າຂ້ອຍບໍ່ໄດ້ຮັບບັດ P-EBT ຂອງຂ້ອຍຍ້ອນການປ່ຽນແປງຂອງທີ່ຢູ່?

ຄອບຄົວຄວນຈະໂທຫາສູນກາງຕິດຕໍ່ຫາຂອງ P-EBT ໄດ້ທີ່ເລກ 833-518-0282 ເພື່ອຄວາມຊ່ວຍເຫລືອນໍາການປ່ຽນແປງທີ່ຢູ່.

# ການໃຊ້ການຊ່ວຍເຫລືອ P-EBT

## 28. ຂ້ອຍຈະສາມາດໃຊ້ບັດການຊ່ວຍເຫລືອ P-EBT ຂອງຂ້ອຍໄດ້ຢູ່ໃສແລະຂ້ອຍສາມາດຈະຊື້ເອົາຫຍັງໄດ້ແດ່?

ໃຊ້ບັດ P-EBT ຂອງທ່ານຄືກັນກັບບັດເດບິດຄາດຫລືຄືກັນກັບບັດ Quest EBT. ການຊ່ວຍເຫລືອຂອງ P-EBT ຂອງທ່ານສາມາດຊື້ເອົາອາຫານໄດ້ຢູ່ຕາມຮ້ານຂາຍອາຫານແລະຕະລາດຊາວນາສ່ວນຫລາຍ.ທ່ານສາມາດໃຊ້ການຊ່ວຍເຫລືອ P-EBT ຂອງທ່ານໄດ້ຢູ່ຕາມຮ້ານຄ້າທຸກໆບ່ອນທີ່ຮັບເອົາບັດ EBT, ລວມທັງອອນລາຍນ໌ຈາກພໍ່ຄ້າທີ່ເຂົ້າຮ່ວມນໍາ.ຮ້ານຄ້າຍ່ອຍສ່ວນຫລາຍມີປ້າຍບອກວ່າເຂົາເຈົ້າຮັບເອົາບັດ EBT. ການຊ່ວຍເຫລືອ P-EBT ສາມາດຖືກໃຊ້ເພື່ອຈະຊື້ເອົາອາຫານຕ່າງໆທີ່ສາມາດຊື້ເອົາໄດ້ດ້ວຍ SNAP EBT. ອາຫານ EBT ທີ່ມີເງື່ອນໄຂແມ່ນອາຫານສ່ວນຫລາຍ,ຍົກເວັ້ນແຕ່ອາຫານທີ່ຖືກແຕ່ງໄວ້ແລ້ວແລະອາຫານຂາຍທີ່ຍັງຮ້ອນໆຢູ່.ທ່ານສາມາດຮຽນຮູ້ເພີ້ມເຕີມອີກໄດ້ກ່ຽວກັບອາຫານ EBT ທີ່ມີເງື່ອນໄຂໂດຍການແວ່ຢ້ຽມແມ່ນຫຍັງແດ່ທີ່ SNAP ສາມາດຊື້ເອົາໄດ້?

## 29. P-EBT ສາມາດຖືກໃຊ້ນໍາການຊັກຊວນພິເສດນໍາຫມາກໄມ້ແລະຜັກບໍ່?

ແມ່ນ.ຄອບຄົວສາມາດໃຊ້ການຊ່ວຍເຫລືອ P-EBT ຂອງເຂົາເຈົ້ານໍາໂຄງການຊັກຊວນພິເສດນໍາຫມາກໄມ້ແລະຜັກລວມທັງ SNAP Market Match ແລະ SNAP Produce Match. .ໂຄງການເຫລົ່ານີ້ອະນຸຍາດໃຫ້ຄອບຄົວທີ່ຈະຕື່ມຂື້ນໃນຈໍານວນຂອງຫມາກໄມ້ແລະຜັກທີ່ມີສິດທີ່ເຂົາເຈົ້າສາມາດໄດ້ຮັບຢູ່ຕາມຮ້ານຂາຍອາຫານແລະຕະລາດຊາວນາບ່ອນທີ່ເຂົ້າຮ່ວມນໍາ.ຮຽນຮູ້ເພີ້ມເຕີມໄດ້ທີ່ SNAP Match Programs.

## 30. ຂ້ອຍຕ້ອງໄດ້ໃຊ້ການຊ່ວຍເຫລືອ P-EBT ຂອງຂ້ອຍທັງຫມົດບໍ່ເມື່ອເວລາຂ້ອຍໄດ້ຮັບມັນ?

ບໍ່.ການຊ່ວຍເຫລືອຈະຍັງເຫລືອຢູ່ຕໍ່ໄປເດືອນຕໍ່ເດືອນ. ການຊ່ວຍເຫລືອ P-EBT ຂອງທ່ານຈະຍັງເຫລືອຢູ່ໃນບັດຂອງທ່ານເປັນເວລາສູງສຸດ 274 ວັນຈາກກິຈກັມເທື່ອສຸດທ້າຍຂອງທ່ານເລີ້ມຕົ້ນຕັ້ງແຕ່ວັນທີເບີກອອກໃຫ້.ຢ່າສູ່ຖີ້ມບັດ P-EBT ຂອງທ່ານໄປ. ຕາບໃດທີ່ເຫດການສຸຂະພາບສາທາຣະນະສຸກເສີນ COVID-19 ຍັງຖືກວາງໃຊ້ຢູ່,ພວກເຮົາຈະເບີກການຊ່ວຍເຫລືອ P-EBT ເພີ້ມເຕີມໃສ່ບັດໃບນີ້.

## 31. ຂ້ອຍຕ້ອງໄດ້ຕັ້ງເລກ PIN ຂອງຂ້ອຍໃສ່ບັດ P-EBT ຂອງຂ້ອຍກ່ອນວັນທີເຈາະຈົງບໍ່?

ຖ້າຫາກວ່າບັດບໍ່ມີເລກຣະຫັດເທື່ອແລະການຊ່ວຍເຫລືອບໍ່ຖືກໃຊ້ພາຍໃນ 274 ວັນຫລັງຈາກການເບີກອອກໃຫ້,ມັນຈະຖືກເອົາອອກແລະບໍ່ສາມາດເຮັດໃຫມ່ແທນໄດ້. ຄອບຄົວຈະຖືກຊັກຊວນໃຫ້ຕັ້ງເລກ PIN ຂອງເຂົາເຈົ້າແລະເປີດໃຊ້ການຊ່ວຍເຫລືອ P-EBT ຂອງເຂົາເຈົ້າໄວ ເທົ່າໄວທີ່ເຂົາເຈົ້າໄດ້ຮັບບັດ,ແຕ່ວ່າບໍ່ມີວັນຂາດໂຕຕັ້ງໄວ້ເພື່ອຈະຕັ້ງເລກ PIN ຫລືເປີດໃຊ້ບັດ P-EBT.

## 32. ຂ້ອຍກວດເບິ່ງເງິນຍັງເຫລືອຢູ່ຂອງຂ້ອຍໄດ້ແນວໃດ?

ທ່ານສາມາດໂທຫາຜູ້ຈຳໜ່າຍ EBT , FIS, ໄດ້ທີ່ເລກ 888-328-9271 (ເລກຢູ່ດ້ານຫລັງຂອງບັດ P-EBT) ເພື່ອຈະກວດເບິ່ງເງິນຍັງເຫລືອຢູ່,ຫລືໄປທີ່ www.ebtEdge.com ຫລືດາວນ໌ໂຫລດແອບປິເກລເຊິນ ebtEdge ໃສ່ໂທຣະສັບມືຖືຂອງທ່ານ.

## 33. ຄົນໃດຄົນນຶ່ງໄດ້ໃຊ້ການຊ່ວຍເຫລືອຂອງຂ້ອຍ.ຂ້ອຍສາມາດໃຫ້ມັນຖືກເຣັດແທນຄືນໃຫ້ໄດ້ບໍ່?

ບໍ່ໄດ້.ພວກເຮົາບໍ່ສາມາດເຣັດແທນຄືນມູນຄ່າຂອງການຊ່ວຍເຫລືອຕ່າງໆທີ່ໄດ້ຖືກແລກປ່ຽນເອົາແລ້ວ.ມັນສຳຄັນຫລາຍທີ່ສຸດທີ່ທ່ານຈະເລືອກເອົາເລກ PIN ທີ່ປອດພັຍເພື່ອຈະຈື່ໄວ້ແຕ່ວ່າບໍ່ໄດ້ຖືກໃຊ້ໂດຍທົ່ວໄປ.ຖ້າຫາກວ່າບັດຂອງທ່ານຖືກເຣັດເສັຽຫລືຂະໂມຍໄປ,ພວກເຮົາຂໍແນະນຳໃຫ້ຕິດຕໍ່ຫາຜູ້ຈຳໜ່າຍ EBT , FIS, ໄດ້ທີ່ເລກ 888-328-9271 ເພື່ອຈະຍົກເລີກບັດຂອງທ່ານແລະຮ້ອງຂໍເອົາໃບໃຫມ່.ຖ້າຫາກວ່າທ່ານສົງສັຍວ່າມີການສໍ້ໂກງ,ໂທຫາສາຍ Washington State Welfare Fraud Hotline ໄດ້ທີ່ເລກ 800-562-6906.

# ຣາຍຣະອຽດ P-EBT ແນວອື່ນ

## 34. ຂ້ອຍບໍ່ໄດ້ຮັບການຊ່ວຍເຫລືອອາຫານຕໍ່ໄປອີກແລ້ວ,ແຕ່ວ່າຂ້ອຍມີລູກອາຍຸຕ່ຳກວ່າ 6 ປີຢູ່ໃນຄອບຄົວຂອງຂ້ອຍ,ຂ້ອຍຄວນຈະຮ້ອງຂໍເອົາໃຫມ່ບໍ່?

ທ່ານສາມາດໂທຫາກົມສັງຄົມສົງເຄາະແລະສາທາຣະນະສຸກເພື່ອຈະຮ້ອງຂໍເອົາການຊ່ວຍເຫລືອອາຫານຈຳເປັນໄດ້ທີ່ເລກ 877-501-2233 ໂຣຫລືແວ່ປ້ຽມ www.washingtonconnection.org. ຖ້າຫາກວ່າຄອບຄົວຂອງທ່ານໄດ້ຖືກພົບວ່າມີເງື່ອນໄຂໄດ້ຮັບການຊ່ວຍເຫລືອອາຫານຈຳເປັນ,ການຊ່ວຍເຫລືອ P-EBT ຈະຖືກກວດເບິ່ງຄືນຕ່າງຫາກ.

## 35. ມີການຊ່ວຍເຫລືອອາຫານອື່ນໆແນວໃດໄວ້ໃຫ້ບໍ່ໃນເວລາດຽວນີ້?

- ເຄື່ອງມືຊອກຫາຄາບອາຫານຍາມພັກຮ້ອນຂອງ USDA ສາມາດຊ່ວຍເຫລືອຄອບຄົວຊອກຫສະຖານທີ່ບ່ອນທີ່ເສີບຄາບອາຫານໃຫ້ເດັກນ້ອຍ.ການເຂົ້າຮ່ວມໃນການບໍຣິການຄາບອາຫານເຫລົ່ານີ້ບໍ່ໄດ້ກີດກັ້ນເດັກນ້ອຍຜູ້ທີ່ມີເງື່ອນໄຂໄດ້ຮັບຈາກການໄດ້ຮັບການຊ່ວຍເຫລືອ P-EBT. ໂຄງການຄາບອາຫານເຫລົ່ານີ້ຈະມີໄວ້ໃຫ້ແກ່ເດັກນ້ອຍທຸກໆຄົນອາຍຸ 18 ປີແລະຕ່ຳກວ່າ,ບໍ່ກ່ຽວວ່າໂຮງຮຽນບ່ອນໃດເຂົາຈະໄປເຂົ້າ.ຄອບຄົວຍັງສາມາດໂທຫາ 1-866-3-HUNGRY (1-866-348-6479) ຫລື 1-877-8-HAMBRE (1-877-842-6273) ເພື່ອຊອກຫາສະຖານທີ່ໃກ້ເຂົາເຈົ້າໃນຣະຫວ່າງເດືອນພັກຍາມຮ້ອນ.
- ທ່ານສາມາດໄປທີ່ www.washingtonconnection.org ເພື່ອຈະຮ້ອງຂໍເອົາການຊ່ວຍເຫລືອອາຫານຈຳເປັນ.
- ຖ້າຫາກວ່າທ່ານມີລູກນ້ອຍ,ທ່ານຍັງຈະມີສິດໄດ້ຮັບໂຄງການຊ່ວຍເຫລືອຜູ້ຍິງ,ເດັກທາຣົກແລະເດັກນ້ອຍຫລືໂຄງການຣ໌ກ,ຊຶ່ງຈະໃຫ້ການຊ່ວຍເຫລືອອາຫານໃຫ້ແກ່ເດັກນ້ອຍຮອດອາຍຸ5ປີແລະແມ່ຜູ້ກຳລັງຖືພາແລະລ້ຽງລູກດ້ວຍນ້ຳນົມແມ່.ຊອກຫາຣາຍຣະອຽດເພີ້ມເຕີມໄດ້ທີ່ https://www.doh.wa.gov/YouandYourFamily/WIC.